**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສາທາລະນະສຸກແຂວງ

ເລກທີ..379../ສທຂ

ອຸດົມໄຊ, ວັນທີ...12....ມີນາ 2024

## ໜັງສືແຈ້ງການ

**ເຖິງ : ຫົວໜ້າ ຫ້ອງການສາທາລະນະສຸກ 7ເມືອງທີ່ນັບຖື.**

**ເລື່ອງ: ເພີ່ມ ທະວີຄວາມຮັບຜິດຊອບຕໍ່ 5 ຈຸດສຸມ ແລະ 9 ຂໍ້ແຂ່ງຂັນເພື່ອພັດທະນາວຽກງານ ສາທາລະນະສຸກສຳເລັດໃນປີ 2024.**

- ອີງຕາມ ຜົນສຳເລັດຂອງກອງປະຊຸມປະຈຳປີ 2023 ຂອງວຽກງານສາທາລະນະສຸກທົ່ວແຂວງອຸດົມໄຊ.

ພະແນກສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານ ຫົວໜ້າ ຫ້ອງການສາທາລະນະສຸກ 7ເມືອງ ໃຫ້ສືບຕໍ່ເພີ່ມຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານ 5 ຈຸດສຸມ ແລະ 9 ຂໍ້ແຂ່ງຂັນຂອງວຽກງານສາທາລະນະສຸກດັ່ງນີ້:

**I. 5 ຈຸດສຸມ.**

1. ເພີ່ມທະວີຄວາມຮັບຜິດຊອບໃນການປັບປຸງກົງຈັກ ແລະ ການເຄື່ອນໄຫວຂອງຫ້ອງການສາທາລະນະສຸກຂັ້ນເມືອງໃຫ້ສຳເລັດໃນປີ 2024;
2. ເພີ່ມທະວີຄວາມຮັບຜິດຊອບໃນການກະກຽມປະກາດເປັນເມືອງຢຸດຕິຖ່າຍຊະຊາຍໃຫ້ສຳເລັດກ່ອນສິ້ນປີ 2024;
3. ເພີ່ມທະວີຄວາມຮັບຜິດຊອບໃນການດຳເນີນການດ້ານຢາປິ່ນປົວພະຍາດໃນໂຮງໝໍເມືອງ ແລະ ສຸກສາລາ, ສືບຕໍ່ປັບປຸງທີມງານ DTC ໃຫ້ມີຄວາມເຂັ້ມແຂງ, ເອົາໃຈໃສ່ສະຫຼຸບລາຍງານການນຳໃຊ້ຢາປິ່ນປົວພະຍາດປະຈຳວັນຂອງສະຖານທີ່ບໍລິການແຕ່ລະແຫ່ງໃຫ້ເປັນປົກກະຕິ ແລະ ທັນເວລາ;
4. ເພີ່ມທະວີການເຝົ້າລະວັງ, ການຕອບໂຕ້ພະຍາດລະບາດຕາມລະດູການ, ການສ້າງລະບຽບການຄວບຄຸມພະຍາດລະບາດຕ່າງໆໃຫ້ເປັນຂອງອົງການປົກຄອງທ້ອງຖິ່ນ;
5. ດ້ານວິຊາສະເພາະທີ່ຈຳເປັນ.
   - ສ້າງບັນຊີເຄື່ອຄາຍເຝົ້າລະວັງແມ່ສ່ຽງໄພ, ນຳເອົາແມ່ສ່ຽງໄພໄປເກີດຢູ່ໂຮງໝໍບ່ອນທີ່ມີຄວາມປອດໄພ (ໂຮງໝໍທີ່ສາມາດຜ່າຕັດເອົາລູກອອກໄດ້), ການດູແລ່ສຸຂະພາບແມ່ ແລະ ເດັກລຸ່ມ < 5 ປີ, ການບໍລິຫານຄຸ້ມຄອງບ້ານແບບຢ່າງສາທາລະນະສຸກໂດຍອົງການປົກຄອງບ້ານ ແລະ ອສບ;
   - ເພີ່ມຄວາມຮັບຜິດຊອບຕໍ່ການປິ່ນປົວຕາມນະໂຍບາຍ 5ດີ 1ພໍໃຈ ແລະລະບົບປະກັນສຸຂະພາບ ດ້ວຍການສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການເຕັກນິກ,ປະກອບອຸປະກອນເຕັກນິກທີ່ຈຳເປັນ;
   - ເພີ່ມຄວາມຮັບຜິດຊອບຕໍ່ການຄຸ້ມຄອງບໍລິຫານເອກະສານ, ການສະຫຼຸບລາຍງານປະຈຳເດືອນ, ປະຈຳປີ, ການປ້ອນຂໍ້ມູນເຂົ້າໃນລະບົບ DHIS2 ແລະ ໃຫ້ລວມສູນດ້ານງົບປະມານ.

I. 9 ຂໍ້ແຂ່ງຂັນ.

1. ປະຕິບັດການຫັນປ່ຽນໃໝ່ດ້ານກົງຈັກ ແລະ ການເຄື່ອນໄຫວວຽກງານສາທາລະນະສຸກຂັ້ນເມືອງ ຕາມຂໍ້ຕົກລົງສະບັບເລກທີ 3562/ສທ, ລົງວັນທີ 1 ພະຈິກ 2023 ທີ່ກະຊວງສາທາລະນະສຸກ ວາງອອກໃຫ້ເຂັ້ມງວດ ແລະ ທັນເວລາ;
2. ສູ້ຊົນສ້າງທຸກເງື່ອນໄຂເພື່ອສືບຕໍ່ບັນລຸ 11 ຕົວຊີ້ວັດຢ່າງແຂງແຮງດ້ວຍຫຼັກຄໍ້າປະກັນໃຫ້ແມ່ຍິງຖືພາທຸກຄົນຕ້ອງໄດ້ຮັບການກວດທ້ອງ 4 ຄັ້ງກ່ອນເກີດ ແລະ ນໍາສົ່ງແມ່ຍິງຖືພາທີ່ສ່ຽງໄພທຸກຄົນໃຫ້ໄດ້ມາເກີດລູກຢູ່ໂຮງໝໍທີ່ສາມາດຊ່ວຍເກີດທີ່ປອດໄພ ແລະ ສືບຕໍ່ປະຕິບັດການບໍລິການສຸຂະພາບແມ່ ແລະ ເດັກແບບເຊື່ອມສານໃຫ້ຄົບຊຸດຕາມກອບວຽກທີ່ກໍານົດໄວ້ຢ່າງແຂງແຮງ;
3. ຕ້ອງຮັບປະກັນ ການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ພະຍາດລະບາດທຸກໆ ລະດູການ ດ້ວຍມາດຕະການ, ລະບຽບການສະເພາະ ຂອງແຕ່ລະທ້ອງຖິ່ນໂດຍແມ່ນຄະນະກໍາມະການຮັກສາສຸຂະພາບແຕ່ລະຂັ້ນເປັນຜູ້ນໍາພາການຈັດຕັ້ງປະຕິບັດ;
4. ເພີ່ມທະວີໃນການໂຄສະນາເຜີຍແຜ່ ຜົນຮ້າຍຂອງຄວັນຢາສູບ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການກໍານົດເຂດປອດຄວັນຢາສູບ, ເຂດຫ້າມສູບຢາ ແລະ ປ້າຍໂຄສະນາຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ ຢູ່ສະຖານທີ່ຕ່າງໆ;
5. ເພີ່ມຄວາມຮັບຜິດຊອບໃນການປະຕິບັດກົນໄກການບໍລິການ 5 ດີ 1 ພໍໃຈ ຢູ່ສະຖານທີ່ບໍລິການຂອງລັດແຕ່ຂັ້ນແຂວງລົງຮອດຂັ້ນສຸກສາລາຕາມຄວາມຮັບຜິດຊອບຂອງແຕ່ລະຂັ້ນໃຫ້ແຂງແຮງ ແລະ ຊັດເຈນ.
6. ສະຖານທີ່ບໍລິການແຕ່ລະຂັ້ນຕ້ອງຮັບປະກັນການຄຸ້ມຄອງ, ການບໍລິການ, ການສະຫຼຸບ-ລາຍງານ ການນໍາໃຊ້ຢາປົວພະຍາດ, ການນໍາໃຊ້ອຸປະກອນສິ້ນເປືອງການແພດ,ນໍ້າຢາເຄມີ ແລະ ອົກຊີແຊນການແພດຢ່າງສົມເຫດສົມຜົນ ພ້ອມທັງລາຍງານຜ່ານລະບົບ Msupply ,Excel sheet ແລະ DHIS2 ໃຫ້ປົກກະຕິ ແລະ ຮັບປະກັນໃຫ້ໄດ້ 100%;
7. ເພີ່ມຄວາມຮັບຜິດຊອບຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ຢູ່ແຕ່ລະຂັ້ນ ໃນການຕິດຕາມ, ກວດກາການຜະລິດນໍ້າດື່ມ, ການຜະລິດນໍ້າກ້ອນຢູ່ພາຍໃນເມືອງຂອງຕົນໃຫ້ປົກກະຕິຕໍ່ເນື່ອງ ແລະ ຕ້ອງໃຫ້ໄດ້ຂຶ້ນທະບຽນ ອຢ ຫຼາຍກວ່າ 85% ຂຶ້ນໄປ;
8. ຍົກສູງຄວາມຮັບຜິດຊອບດ້ານການບໍລິຫານ, ການຄຸ້ມຄອງການນໍາໃຊ້ພະນັກງານ, ການນໍາໃຊ້ງົບປະມານ, ການສ້າງແຜນຈຸລະພາກ ແລະ ການນໍາໃຊ້ຊັບພະຍາກອນທີ່ມີຈໍາກັດໃຫ້ເກີດປະໂຫຍດສູງສຸດ ແລະ ຖືກຕ້ອງຕາມລະບຽບການທີ່ກໍານົດໄວ້, ການສະຫຼຸບລາຍງານຜົນການປະຕິບັດວຽກງານໃນແຕ່ລະໄລຍະໃຫ້ທັນເວລາ ແລະ ຮັບປະກັນຄວາມຖືກຕ້ອງ 100%;
9. ຍົກສູງຄວາມຮັບຜິດຊອບໃຫ້ອົງການປົກຄອງເມືອງ ຊ່ວຍນໍາພາການປະຕິບັດວຽກງານຊຸມຊົນເປັນເຈົ້າການດ້ານສຸຂະອານາໄມ ເພື່ອໃຫ້ໄດ້ປະກາດເປັນເມືອງຍຸດຕິການຖ່າຍຊະຊາຍໃນປີ 2024 (ສ່ວນເມືອງທີ່ປະກາດແລ້ວແມ່ນໃຫ້ສືບຕໍ່ປັບປຸງສ້ອມແປງ ແລະ ປົກປັກຮັກສາໃຫ້ແຂງແຮງ ແລະ ຍືນຍົງ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງຫ້ອງການສາທາລະນະສຸກ 7 ເມືອງເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມໜ້າທີ່ຂອງໃຜລາວໃຫ້ສໍາເລັດ.

ຫົວໜ້າພະແນກ

ບ່ອນສົ່ງ:
1. ສໍາເນົາໄວ້ 1 ສະບັບ;
2. ຫ້ອງການສາທາເມືອງລະ 1 ສະບັບ.

ພະແນກສາທາລະນະສຸກ

ທຸມພັນ ອິນທະນຸວົງ